ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 15 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 0 2 NOV 2015


ສຳນັກງານ ຄຄຊ
ເລກທີ ...1113...
ວັນທີ..0.2.NOV 2015
ໂທລະສັບ 021 217770


## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 09/2015 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I

## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ; ປະຕິບັດລະບອບການສ່ອງແສງລາຍງານ ແລະ ການດຳເນີນຊີວິດການເມືອງພາຍໃນໜ່ວຍພັກ, ກົມກອງ ແລະ ອົງການຈັດຕັ້ງມະຫາຊົນ ປະຈຳເດືອນ ເພື່ອກວດກາຕີລາຄາຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ພົ້ນເດັ່ນແມ່ນ: ສຳເລັດກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ສາຍລັດ ປະຈຳເດືອນ 8/2015, ສຳເລັດການເຜີຍແຜ່ເອກະສານບຸນເຊື່ອວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 60 ປີ; ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ້ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານພົ້ນເດັ່ນ

1. ❶ວຽກງານຄຸ້ມຄອງທະນາຄານທຸລະກິດ: ສຳເລັດການອອກໃບອະນຸຍາດສ້າງຕັ້ງຊົ່ວຄາວໃຫ້ແກ່ທະນາຄານ ມາເລຍັນ ເບີຫັດ ສາຂາໜອງດ້ວງ ແລະ ອອກຂໍ້ຕົກລົງວ່າດ້ວຍການຮັບຮອງລະບຽບພາຍໃນຂອງທະນາຄານ ແຄນນາເດຍ ລາວ ຈຳກັດ, ອອກຂໍ້ຕົກລົງກ່າວເຕືອນທະນາຄານການຄ້າລາກົນ ຈຳກັດ ທີ່ບໍ່ສາມາດສົ່ງລາຍງານຖານະເງິນຝາກທັງໝົດແຍກຕາມປະເພດເງິນຝາກປະຈຳເດືອນ 5, 6 ແລະ 7/2015; ❷ວຽກງານຄຸ້ມຄອງສະຖາບັນການເງິນ ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຖາວອນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ) ລາວໂທລະຄົມ ແລະ ມອບໃບອະນຸຍາດດຳເນີນທຸລະກິດຊົ່ວຄາວໃຫ້ແກ່ບໍລິສັດແສງໄຊ ເຊົ່າສິນເຊື່ອ; ສຳເລັດການອອກຂໍ້ຕົກລົງຍຸບເລີກໂຮງຊວດຈຳ ຄຳມຸນທາ ແລະ ໂຮງຊວດຈຳນະຄອນຫຼວງ; ສຳເລັດການແຈ້ງເຕືອນສະຖາບັນການເງິນທີ່ບໍ່ຮັບເງິນຝາກ (ສກຈບ) ວົງວານໄຊ ແລະ ສກຈບ ນົວຄອນເຊັນ ກ່ຽວກັບອາຍຸການນຳໃຊ້ຂອງໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ, ແຈ້ງເຕືອນບັນດາໂຮງຊວດຈຳ ແລະ ບໍລິສັດເຊົ່າສິນເຊື່ອ ທີ່ບໍ່ສົ່ງບົດລາຍງານ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) ເພື່ອການລົງທຶນ ແລະ ພັດທະນາ ກ່ຽວກັບການແກ້ໄຂຂໍ້ຄົງຄ້າງຕາມການລົງກວດກາປະຈຳປີ 2014, ສຳເລັດການແຈ້ງເຕືອນຄັ້ງທີ 1 ກ່ຽວກັບໄລຍະເວລາຂອງໃບອະນຸຍາດດຳເນີນທຸລະກິດຖາວອນຂອງ ສກຈບ ເອສເຄ

ພື: ສຳເລັດການປຶກສາຫາລືກັບຄະນະບໍລິຫານຂອງ ສກຈຮ ນິວຕັນ ກ່ຽວກັບລູກຄ້າຮ້ອງຟ້ອງຂໍ້ຄວາມເປັນທຳ ເນື່ອງຈາກວ່າບໍ່ສາມາດຖອນເງິນໄດ້ ແລະ ອອກແຈ້ງເຕືອນກ່ຽວກັບການແກ້ໄຂຂໍ້ຄົງຄ້າງ;

2. ສຳເລັດກອງປະຊຸມສະໄໝສາມັນຄັ້ງທີ III ຂອງຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3. ສຳເລັດການສະຫຼຸບບັນຫາໜີ້ສິນຂອງກະຊວງການເງິນ (ໃນຮູບແບບພັນທະບັດ ແລະ ສິນເຊື່ອ) ທີ່ຕິດພັນກັບທະນາຄານແຫ່ງ ສປປ ລາວ;

4. ສຳເລັດການອວ່າຍໜີ້ສາມແຈ ແລະ ໂອນອາກອນຈາກການອວ່າຍໜີ້ສາມແຈ ລວມມູນຄ່າ 114,74 ຕື້ກີບ ໃນນັ້ນ, ອວ່າຍໜີ້ສາມແຈ ຄັ້ງທີ 1 ໃຫ້ 8 ບໍລິສັດ ມູນຄ່າ 12,25 ຕື້ກີບ, ຄັ້ງທີ 2 ໃຫ້ 3 ບໍລິສັດ ມູນຄ່າ 28,36 ຕື້ກີບ ແລະ ໂອນອາກອນຈຳນວນ 74,14 ຕື້ກີບ;

5. ປະທານ ຄຄຊ ໄດ້ອອກຂໍ້ຕົກລົງຮັບຮອງເອົາ ❶ຂໍ້ຕົກລົງວ່າດ້ວຍການກຳນົດອັດຕາຄ່າທຳນຽມການຊື້-ຂາຍຮຸ້ນ ແລະ ການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ, ❷ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຕະຫຼາດຫຼັກຊັບໃຫ້ເປັນຜູ້ກຳນົດ ລະຫັດຫຼັກຊັບແຫ່ງຊາດລາວ ແລະ ❸ຂໍ້ຕົກລົງວ່າດ້ວຍການເພີ່ມອັດຕາສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດໃນບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ;

6. ສຳເລັດກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ II ປະຈຳປີ 2015;

7. ສຳເລັດການປັບປຸງຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການລະບົບຊຳລະສະສາງມູນຄ່າສູງ;

8. ສຳເລັດການແຈ້ງການໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນ ໃຫ້ເອົາໃຈໃສ່ປະຕິບັດຂໍ້ຕົກລົງວ່າດ້ວຍການລາຍງານທຸລະກຳໂອນເງິນທີ່ມູນຄ່າສູງເກີນກຳນົດ; ການລາຍງານທະນາຄານຕົວແທນກ່ຽວກັບການພົວພັນເປີດບັນຊີ ເພື່ອຊຳລະສະສາງກັບທະນາຄານຕົວແທນຢູ່ຕ່າງປະເທດ;

9. ສຳເລັດການອອກຂໍ້ຕົກລົງຮັບຮອງເອົາທະນາຄານ ຄາເທຍູໄນເຕັດ ຈຳກັດ ເຂົ້າເປັນສະມາຊິກກອງທຶນປົກປ້ອງຜູ້ຝາກເງິນ;

10. ສຳເລັດການຈົດທະບຽນລິຂະສິດປຶ້ມປະຫວັດຄວາມເປັນມາຂອງເງິນກີບແຫ່ງຊາດລາວ ຢູ່ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;

11. ໄດ້ຮັບເງິນປອມ ແລະ ອອກໃບຢັ້ງຢືນເງິນປອມໃຫ້ຫ້ອງການສືບຕໍານ ປກສ ນະຄອນຫຼວງວຽງຈັນ ຄື: ໃບ 100 $ ຈຳນວນ 5 ໃບ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະເພດໃບ 50.000 ກີບ 1 ໃບ;

12. ສຳເລັດການເປີດໂຕຜະລິດຕະພັນ BCEL Go-Brand Card ເປັນການຮ່ວມມືລະຫວ່າງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ການບິນລາວ ແລະ Union Pay;

13. ໃນເດືອນນີ້ ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້, ທະນາຄານແຫ່ງ ສປປ ລາວ ເກັບໜີ້ໄດ້ 884,11 ລ້ານກີບ.

## III. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

ໃນເດືອນ 8 ແລະ 9/2015 ເສດຖະກິດໂລກຍັງປະເຊີນກັບສິ່ງທ້າທາຍຕໍ່ການຟື້ນຕົວ ແລະ ການພັດທະນາທີ່ຍືນຍົງ ເປັນຕົ້ນແມ່ນບັນຫາໜີ້ສິນຢູເອີຣົບ, ບັນຫາຄວາມບໍ່ສະຫງົບທາງດ້ານການເມືອງໃນຫຼາຍຂົງເຂດທົ່ວໂລກ, ອັນພົ້ນເດັ່ນແມ່ນ ທ່າອ່ຽງການຂະຫຍາຍຕົວທີ່ຊໍາລົງຂອງເສດຖະກິດອັນດັບ 2 ຂອງໂລກ ຄື: ສປ ຈີນ ຊຶ່ງເຮັດໃຫ້ລັດຖະບານ ສປ ຈີນ ໄດ້ນຳໃຊ້ຫຼາຍມາດຕະການເພື່ອກະຕຸ້ນເສດຖະກິດ ແລະ ຮັກສາສະຖຽນລະພາບດ້ານເງິນຕາ ເປັນຕົ້ນທະນາຄານກາງ ສປ ຈີນ ໄດ້ອັດສີດເງິນຜ່ານສັນຍາຊື້-ຂາຍຝາກພັນທະບັດ 7 ວັນ ຈຳນວນ 210 ຕື້ຢວນ, ຫຼຸດອັດຕາເງິນແຮບັງຄັບ 0,5%, ຫຼຸດອັດຕາດອກເບ້ຍເງິນກູ້ 1 ປີ 0,25%, ຫຼຸດອັດຕາ

ດອກເບ້ຍເງິນຝາກ 0,25% ແລະ ຫຼຸດຄ່າເງິນຢວນ 3,5%, ຈາກສະພາບການດັ່ງກ່າວ ເຮັດໃຫ້ດັດຊະນີຕະຫຼາດຮຸ້ນໃນພາກພື້ນ ແລະ ສາກົນ ຫຼຸດລົງຕິດຕໍ່ກັນຫຼາຍວັນ, ລາຄານ້ຳມັນຫຼຸດລົງ, ຄ່າເງິນຫຼາຍປະເທດຜັນຜວນ ແລະ ອ່ອນຄ່າເມື່ອທຽບກັບເງິນໂດລາສະຫະລັດ ໂດຍສະເພາະຄ່າເງິນຂອງບັນດາປະເທດໃນຂົງເຂດອາຊີທີ່ເປັນຄູ່ຄ້າກັບ ສປ ຈີນ ເປັນຕົ້ນແມ່ນຫວຽດນາມ, ມາເລເຊຍ, ສ. ເກົາຫຼີ, ອິນເດຍ, ສິງກະໂປ ແລະ ໄທ;

ສະພາບອັດຕາແລກປ່ຽນໃນຕະຫຼາດສາກົນ ເຫັນວ່າເງິນໂດລາອ່ອນຄ່າເມື່ອທຽບກັບເງິນເອີໂຣ ແລະ ເງິນເຢນ ຍ້ອນນັກລົງທຶນບໍ່ໝັ້ນໃຈຕໍ່ການຟື້ນຕົວຂອງເສດຖະກິດສະຫະລັດ ພາຍຫຼັງຕົວເລກສ້າງບ້ານໃໝ່ຂອງສະຫະລັດ ຫຼຸດລົງ 0,2% ໃນເດືອນ 7/2015 ຈາກ 12,3% ໃນເດືອນ 6/2015 ແລະ ສະຫະລັດໄດ້ປະກາດຕົວເລກຜູ້ຂໍສະຫວັດດີການວ່າງງານ ຄັ້ງທຳອິດໃນວັນທີ 15/8/2015 ເພີ່ມຂຶ້ນເປັນ 277.000 ຄົນ ຈາກ 273.000 ຄົນ ໃນອາທິດຜ່ານມາ. ສ່ວນຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າເມື່ອທຽບກັບເງິນໂດລາສະຫະລັດ ຍ້ອນການປັບຫຼຸດຄ່າເງິນຢວນ ຂອງ ສປ ຈີນ ບວກກັບນັກລົງທຶນຕ່າງປະເທດເທຂາຍພັນທະບັດໄທ;

ລາຄານ້ຳມັນໃນຕະຫຼາດໂລກ ຫຼຸດລົງ 8,11% ຢູ່ທີ່ 43,82 ໂດລາ/ບາເຣວ ຍ້ອນການຄາດຄະເນປະລິມານນ້ຳມັນດິບ ເຂດທະເລເໜືອ ຈະເພີ່ມຂຶ້ນ 0,06 ລ້ານບາເຣວ/ວັນ ເປັນ 2,07 ລ້ານບາເຣວ/ວັນ ຊຶ່ງເປັນລະດັບທີ່ສູງທີ່ສຸດໃນຮອບ 2 ປີ. ສ່ວນລາຄາຄຳຄາດວ່າຈະເພີ່ມຂຶ້ນ 2,25% ຢູ່ທີ່ 1.129,16 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພື່ອເກັງກຳໄລ ບວກກັບການອ່ອນຄ່າຂອງເງິນໂດລາໃນຕະຫຼາດສາກົນ.

## 2. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

ທະນາຄານແຫ່ງ ສປປ ລາວ ໄດ້ສືບຕໍ່ປະຕິບັດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດ ລຸ່ມນີ້:

- ອັດຕາເງິນເຟີ້ປະຈຳເດືອນ 09/2015 (ຕົວເລກຄາດຄະເນ) ຢູ່ໃນລະດັບ 1,31% ເພີ່ມຂຶ້ນ 0,02% ຈາກ 1,29% ໃນເດືອນ 08/2015;
- ຖານເງິນຕາປະຈຳເດືອນ 9/2015 ເພີ່ມຂຶ້ນ 1.412,53 ຕື້ກີບ ຫຼື 4,66% ທຽບໃສ່ເດືອນ 8/2015 ສາເຫດຍ້ອນໄດ້ຮັບເງິນໂອນຈາກຕ່າງປະເທດສຸດທິ 123,24 ລ້ານໂດລາສະຫະລັດ, ທະນາຄານແຫ່ງ ສປປ ລາວ ປ່ອຍສິນເຊື່ອໃຫ້ໂຄງການບຸລິມະສິດຂອງລັດຖະບານ 45 ລ້ານໂດລາສະຫະລັດ, ປ່ອຍສິນເຊື່ອໃຫ້ສະຖາບັນການເງິນ 454 ຕື້ກີບ ແລະ ໂອນຊຳລະຄ່າອອກແບບ ແລະ ຊື້ດິນສິ່ງປຸກສ້າງທະນາຄານແຫ່ງ ສປປ ລາວ 113,19 ຕື້ກີບ. ປະລິມານເງິນ $M_2$ ເພີ່ມຂຶ້ນ 855,19 ຕື້ກີບ ຫຼື 1,49% ເມື່ອທຽບໃສ່ເດືອນ 8/2015;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 9/2015 ເຫັນວ່າເງິນກີບອ່ອນຄ່າ 0,22% ທຽບໃສ່ເງິນໂດລາສະຫະລັດ ແຕ່ແຂງຄ່າ 2,24% ທຽບໃສ່ເງິນບາດ. ສ່ວນຕ່າງລະຫວ່າງອັດຕາ ທທກ ກັບອັດຕາຕະຫຼາດຫ່າງອອກຈາກກັນສຳລັບກີບທຽບໂດລາ ຄື: ຈາກ 0,13% ມາເປັນ 0,94% ແຕ່ຫຍັບເຂົ້າຫາກັນສຳລັບກີບທຽບບາດ ຈາກ 0,75% ມາເປັນ 0,59%. ຖ້າລົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າ 1,32% ທຽບກັບເງິນໂດລາແຕ່ແຂງຄ່າ 6,77% ທຽບເງິນບາດ;

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 1)**

- ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ຮອດວັນທີ 15/9/2015 ເຫັນວ່າມູນຄ່າຊື້ຂາຍເງິນຕາຕ່າງປະເທດ ເພີ່ມຂຶ້ນ 60,68%; ເຫັນໄດ້ຈາກຄວາມຕ້ອງການຫຼາຍກວ່າການຕອບສະໜອງ ຊຶ່ງເຫັນໄດ້ຈາກ ທທກ ຂາຍສຸດທິ 311,97 ລ້ານໂດລາ

ທຽບເທົ່າ, ໃນນັ້ນ ຊື້ໂດລາສຸດທິ 29,42 ລ້ານໂດລາ ແຕ່ຂາຍເງິນບາດສຸດທິ 12.192,78 ລ້ານບາດ. ທທລ ຂາຍສຸດທິ 118,73 ລ້ານໂດລາທຽບເທົ່າ, ໃນນັ້ນ ຂາຍໂດລາສຸດທິ 139,35 ລ້ານໂດລາ ແຕ່ຊື້ເງິນບາດສຸດທິ 736,50 ລ້ານບາດ;

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 2)**

- ດູນການຊຳລະກັບຕ່າງປະເທດຜ່ານ ITRS ປະຈຳເດືອນ 9/2015 (15/8-14/9/2015) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານ ສຸດທິ 94,44 ລ້ານໂດລາສະຫະລັດ, ໃນນັ້ນ, ກະແສເງິນໄຫຼອອກ 1.041,82 ລ້ານໂດລາສະຫະລັດ ຊຶ່ງມາຈາກການຊຳລະເງິນກູ້ຢືມຈາກຕ່າງປະເທດຂອງຂະແໜງການທະນາຄານ ຈຳນວນ 595 ລ້ານໂດລາສະຫະລັດ. ສ່ວນກະແສເງິນ ໄຫຼເຂົ້າ ມີຈຳນວນ 947,38 ລ້ານໂດລາສະຫະລັດ ຊຶ່ງມາຈາກເງິນກູ້ຢືມຈາກຕ່າງປະເທດຂອງຂະແໜງການທະນາຄານ ຈຳນວນ 499,88 ລ້ານໂດລາສະຫະລັດ ແລະ ເງິນລົງທຶນໂດຍກົງຈາກຕ່າງປະເທດ 72,12 ລ້ານໂດລາສະຫະລັດ.

3. <u>ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ</u>

ການລະດົມເງິນຝາກຮອດວັນທີ 15/09/2015 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 50.645,72 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 1.71%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 2,97% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 51,50% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດເພີ່ມຂຶ້ນ 0,41% ຊຶ່ງກວມເອົາ 48,50% ຂອງເງິນຝາກທັງໝົດ;

ການປ່ອຍສິນເຊື່ອຮອດວັນທີ 15/09/2015 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 45.203,07 ຕື້ກີບ ເພີ່ມຂຶ້ນ 1,88% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 49,52% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາ ກວມເອົາ 50,48% ຂອງສິນເຊື່ອທັງໝົດ;

ໃນເດືອນ 09/2015 ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດ 140,59 ຕື້ກີບ ເທົ່າກັບ 58,07% ຂອງແຜນການ ຖ້າທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 104,81% (134,13 ຕື້ກີບ). ເກັບຕົ້ນທຶນໄດ້ 37,28 ຕື້ກີບ, ເກັບດອກເບ້ຍໄດ້ 7,09 ຕື້ກີບ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 09/2015 ມີຈຳນວນ 2.570,03 ຕື້ກີບ. ໃນນີ້ ໜີ້ NPL ມີຈຳນວນ 648,68 ຕື້ກີບ ກວມເອົາ 25,24% ຂອງຍອດສິນເຊື່ອທັງໝົດ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 07/2015 ມີ ຈຳນວນ 3.355,03 ຕື້ກີບ ຫຼຸດລົງ 0.74% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 5.82% ຂອງຍອດເຫຼືອສິນເຊື່ອທັງໝົດ. ຊຶ່ງເກີດຈາກທະນາຄານສົ່ງເສີມກະສິກຳ, ທະນາຄານພັດທະນາລາວ, ທະນາຄານເອແອັນແຊັດລາວ ມີໜີ້ NPLs ເພີ່ມຂຶ້ນຫຼາຍກວ່າໝູ່.

4. <u>ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ</u>

4.1. <u>ການເຄື່ອນໄຫວຊຳລະສະສາງ</u>

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 4.414 ສະບັບ ເພີ່ມຂຶ້ນ 18,71% ເປັນເງິນຈຳນວນ 3.207,38 ຕື້ກີບ ຫຼຸດລົງ 50,72% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 175 ຄັ້ງ ມີມູນຄ່າການໂອນ 700,84 ຕື້ກີບ ເພີ່ມຂຶ້ນ 6,81% ເມື່ອທຽບໃສ່ເດືອນຜ່ານມາ.

[1] ເດືອນ 8-9/2014 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງບໍ່ທັນຄົບຖ້ວນ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 27/08-26/09/2015 ມີການເຄື່ອນໄຫວ ຈໍານວນ 7.242 ຄັ້ງ ລາຍລະອຽດມີ ດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 7.170 ຄັ້ງ ມີມູນຄ່າການໂອນ 1.803,28 ຕື້ກີບ ຫຼຸດລົງ 21,96% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານພັດທະນາລາວ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 1.841 ຄັ້ງ ຈາກທະນາຄານທີ່ເຮັດທຸລະກໍາທັງໝົດ 35 ທະນາຄານ, 1 ຕະຫຼາດຫຼັກຊັບ ແລະ Bconnex;
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈໍານວນ 57 ຄັ້ງ ມີມູນຄ່າ 282,77 ຕື້ກີບ ຫຼຸດລົງ 22,91% ທຽບໃສ່ເດືອນຜ່ານມາ;
- **ສະກຸນເງິນໂດລາສະຫະລັດ:** ມີການເຄື່ອນໄຫວ 2 ຄັ້ງ ມີມູນຄ່າການໂອນ 10.000 ໂດລາ ຈາກທັງໝົດ 3 ທະນາຄານ;
- **ສະກຸນເງິນບາດ:** ມີການເຄື່ອນໄຫວ 13 ຄັ້ງ ມີມູນຄ່າໂອນ 734,93 ລ້ານບາດ ຈາກທັງໝົດ 5 ທະນາຄານ.

## 4.2 ການຊື້-ຂາຍພັນທະບັດ

ພາຍໃນເດືອນ 9/2015 ພັນທະບັດກະຊວງການເງິນ ມີການໄຖ່ຖອນ ຈໍານວນ 93 ຕື້ກີບ ຊຶ່ງໄດ້ໄຖ່ຖອນໃຫ້ທະນາຄານທຸລະກິດທັງໝົດ. ປັດຈຸບັນພັນທະບັດກະຊວງການເງິນ ມີທັງໝົດ 4 ບ່ວງ ຊຶ່ງມີຍອດເຫຼືອ 5.572,80 ຕື້ກີບ ແລະ 90 ລ້ານໂດລາ (ບ່ວງດຸນດ່ຽງງົບປະມານ 135 ຕື້ກີບ, ບ່ວງລະດົມທຶນຈາກທະນາຄານທຸລະກິດ ໂດຍກົງ 545 ຕື້ກີບ ແລະ 90 ລ້ານໂດລາ, ບ່ວງກະຊວງການເງິນຈໍາໜ່າຍເອງເພື່ອລ້າງໜີ້ 3.635,80 ຕື້ກີບ, ບ່ວງລະດົມທຶນຈາກທະນາຄານທຸລະກິດ ປະມູນຜ່ານທະນາຄານແຫ່ງ ສປປ ລາວ ຈໍານວນ 1.257 ຕື້ກີບ).

ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 09/2015 ມີການຈໍາໜ່າຍພັນທະບັດ ຈໍານວນ 50 ລ້ານໂດລາສະຫະລັດ, ໄຖ່ຖອນພັນທະບັດບ່ວງຈໍາໜ່າຍປີ 2013 ຈໍານວນ 10 ລ້ານໂດລາສະຫະລັດ. ປັດຈຸບັນຍັງມີຍອດເຫຼືອພັນທະບັດທີ່ຍັງບໍ່ທັນມີການໄຖ່ຖອນ ຈໍານວນ 194 ລ້ານໂດລາ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.243,91 ຈຸດ ຫຼຸດລົງ 3,40% ເມື່ອທຽບໃສ່ເດືອນຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 3,53 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 21,90 ຕື້ກີບ ຫຼຸດລົງ 28,43% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 43,43% ຂອງມູນຄ່າການຊື້-ຂາຍທັງໝົດ.
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.540 ກີບ/ຮຸ້ນ ຫຼຸດລົງ 416 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 92.021 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 509,84 ລ້ານກີບ ຫຼຸດລົງ 86,67% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 20,16% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,78%[2].
- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.250 ກີບ/ຮຸ້ນ ຫຼຸດລົງ 614 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 3,40 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 21,26 ຕື້ກີບ ຫຼຸດລົງ 20,42% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 44,06% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,23%[3].

---

[2] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

- ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.871 ກີບ/ຮຸ້ນ ຫຼຸດລົງ 129 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 3.100 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 24,40 ລ້ານກີບ ເພີ່ມຂຶ້ນ 2.950% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 50% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].
- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.823 ກີບ/ຮຸ້ນ ຫຼຸດລົງ 82 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 39.178 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 110,61 ລ້ານກີບ ເພີ່ມຂຶ້ນ 69,75% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 12,77% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,67%[5].

## IV. <u>ດ້ານອ່ອນ ແລະ ຂໍ້ຄົງຄ້າງ</u>

1. ການສຶກສາອົບຮົມທາງດ້ານການເມືອງ-ແນວຄິດ ເຖິງແມ່ນວ່າໄດ້ດຳເນີນຢ່າງເປັນປະຈຳແຕ່ກໍ່ຍັງບໍ່ທັນເລິກເຊິ່ງ ແລະ ບໍ່ທັນເປັນປົກກະຕິເທົ່າທີ່ຄວນ, ສ່ວນໃຫຍ່ແມ່ນປະຕິບັດຕາມທິດຊີ້ນຳລວມຂອງຂັ້ນເທິງ ບວກກັບພະນັກງານສ່ວນໃຫຍ່ເປັນພະນັກງານໜຸ່ມນ້ອຍ, ຈຶ່ງເຮັດໃຫ້ການຄົ້ນຄວ້າເຊື່ອມຊຶມເອກະສານ, ຂໍ້ກຳນົດ, ກົດລະບຽບຕ່າງໆ ຂອງພະນັກງານຈຳນວນໜຶ່ງຍັງບໍ່ທັນເລິກເຊິ່ງ, ການປະຕິບັດລະບຽບລັດຖະກອນຂອງພະນັກງານຈຳນວນໜຶ່ງຍັງຊັກຊ້າ ເປັນຕົ້ນການປະຕິບັດເວລາເຂົ້າການ;
2. ການປະຕິບັດວຽກງານຕາມແຜນການດຳເນີນງານ ປະຈຳປີ 2015 ຍັງບໍ່ສາມາດປະຕິບັດຕາມແຜນທີ່ວາງໄວ້, ເນື່ອງຈາກຕ້ອງໄດ້ປະຕິບັດວຽກງານອື່ນທີ່ຮີບດ່ວນ;
3. ການສ້າງຂະບວນການຂອງແຕ່ລະອົງການຈັດຕັ້ງ ຍັງບໍ່ທັນຟົດຟື້ນເທົ່າທີ່ຄວນ, ການຈັດຕັ້ງຮ່ວມຊີວິດຕາມລະບຽບຂອງແຕ່ລະອົງການຈັດຕັ້ງຍັງບໍ່ທັນເປັນປົກກະຕິເທົ່າທີ່ຄວນ;
4. ໜີ້ບໍ່ເກີດດອກອອກຜົນໃນລະບົບທະນາຄານເຫັນວ່າຍັງມີແນວໂນ້ມເພີ່ມຂຶ້ນ ຍ້ອນມາຈາກປັດໃຈພາຍໃນ ແລະ ພາຍນອກຂອງທະນາຄານທຸລະກິດ ຄື: ພະນັກງານສິນເຊື່ອຂອງທະນາຄານເກັບກຳຂໍ້ມູນລູກຄ້າບໍ່ໄດ້ລະອຽດ, ການພິຈາລະນາການປ່ອຍສິນເຊື່ອຍັງບໍ່ທັນຮັດກຸມເທົ່າທີ່ຄວນ, ການໃກ້ຊິດຕິດແທດ ແລະ ການໃຫ້ຄຳປຶກສາແນະນຳລູກຄ້າກ່ຽວກັບການນຳໃຊ້ເງິນກູ້ໃຫ້ຖືກຕາມເປົ້າໝາຍ ອາດຍັງເຮັດບໍ່ໄດ້ດີ; ທຸລະກິດລູກຄ້າບໍ່ມີປະສິດທິພາບ ແລະ ບໍ່ມີປະສິດທິຜົນ. ພ້ອມດຽວກັນນີ້, ລູກຄ້າບໍ່ມີຄວາມຈິງໃຈໃນການຊຳລະເງິນກູ້ຄືນໃຫ້ທະນາຄານ, ສະພາບເສດຖະກິດພາຍໃນ ແລະ ພາຍນອກມີການປ່ຽນແປງ ເຮັດໃຫ້ທຸລະກິດບໍ່ເປັນໄປຕາມແຜນການ ແລະ ເປົ້າໝາຍ ແລະ ບາງທຸລະກິດຕິດພັນກັບງົບປະມານຂອງລັດ.

ເພື່ອແກ້ໄຂບັນດາດ້ານອ່ອນ ແລະ ຂໍ້ຄົງຄ້າງຂ້າງເທິງນີ້ນັບນັບດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ຈຶ່ງໄດ້ມີການເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານເປັນປົກກະຕິ. ປຸກລະດົມພະນັກງານໃຫ້ມີຄວາມກະຕືລືລົ້ນ ມີຄວາມຮັບຜິດຊອບສູງ. ຊຸກຍູ້ພະນັກງານໃຫ້ມີຄວາມເອົາໃຈໃສ່ຮຽນຮູ້ປະສົບການຕ່າງໆ ດ້ານວຽກງານວິຊາສະເພາະໃຫ້ມີຄວາມໜັກແໜ້ນກວ້າງຂວາງກວ່າເກົ່າ. ສົ່ງເສີມເສີມຂະຫຍາຍດ້ານດີ ປັບປຸງແກ້ໄຂຂໍ້ຄົງຄ້າງດ້ານຕ່າງໆ ໃຫ້ຕີຖອຍເທື່ອລະກ້າວ. ເອົາໃຈໃສ່ປຸກລະດົມຊັກຊວນພະນັກງານ ໃຫ້ເຂົ້າຮ່ວມວຽກງານຂະບວນການຕ່າງໆຢ່າງເປັນຂະບວນຟົດຟື້ນ.

ຊຸກຍູ້ທະນາຄານທຸລະກິດລັດໃຫ້ເພີ່ມທະວີແບບແຜນວິທີນຳພາ, ແບບແຜນວິທີເຮັດວຽກຂອງຄະນະນຳແຕ່ລະຂັ້ນ, ສຶກສາອົບຮົມພະນັກງານໃຫ້ເຂົ້າໃຈຕໍ່ໜ້າທີ່ວຽກງານຂອງຕົນຢ່າງເລິກເຊິ່ງ ເຮັດໃຫ້ພະນັກງານມີຄວາມຊື່ສັດ ແລະ ຮັບຜິດຊອບຕໍ່ໜ້າທີ່

[4] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;
[5] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ຂອງຕົນໃຫ້ສູງຂຶ້ນ. ຊຸກຍູ້ພະນັກງານໃຫ້ມີຄວາມເອົາໃຈໃສ່, ກະຕືລືລົ້ນໃນການຮຽນຮູ້ປະລິບການ. ສູ້ຊົນເສີມຂະຫຍາຍດ້ານດີ, ປັບປຸງແກ້ໄຂຂໍ້ຄົງຄ້າງໃຫ້ຫຼຸດຖອຍເທື່ອລະກ້າວ.

## ພາກທີ II

## ທິດທາງແຜນການໃນຕໍ່ໜ້າ

### I. ວຽກງານການເມືອງແນວຄິດ

ສືບຕໍ່ນໍາພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກໍານົດໄວ້ໃນແຜນງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈໍາລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສໍາຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ;
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນໍາໃຊ້ເງິນກີບ ແລະ ການຊໍາລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງ ສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນໍາໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນໍາໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;
- ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບັນດານິຕິກໍາທີ່ຕິດພັນກັບວຽກງານວິຊາສະເພາະຕ່າງໆ ໄດ້ແກ່: ❶ສືບຕໍ່ຄົ້ນຄວ້າຮ່າງດໍາລັດວ່າດ້ວຍການປົກປ້ອງຜູ້ບໍລິໂພກທາງການເງິນ, ດໍາລັດວ່າດ້ວຍການປົກປ້ອງເງິນຝາກ, ດໍາລັດວ່າດ້ວຍລະບົບຊໍາລະສະສາງແຫ່ງຊາດ; ❷ສືບຕໍ່ປັບປຸງຂໍ້ຕົກລົງວ່າດ້ວຍການລາຍງານທຸລະກໍາເງິນໂອນພາຍໃນປະເທດ ທີ່ມີມູນຄ່າເກີນກໍານົດ, ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການຂາຍຫຼັກຊັບທີ່ໄດ້ຮັບຈາກການຊໍາລະໜີ້ຂອງທະນາຄານທຸລະກິດ (ຊໍາລະສະສາງຫຼັກຊັບຄໍ້າປະກັນ), ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການປັບປຸງ ແລະ ເພີ່ມເຕີມເນື້ອໃນບາງມາດຕາ ແລະ ຄໍາແນະນໍາເພີ່ມເຕີມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮ

ສຳລັບໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 324/ທຫລ; ❸ສືບຕໍ່ຮ່າງລະບຽບກ່ຽວກັບການຢຶດ ແລະ ອາຍັດຊັບທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອພັນລະຫຍາຍມາດຕາ 38, 39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ລະບຽບວ່າດ້ວຍການສ້າງຕັ້ງສະຖາບັນການເງິນ ເພື່ອຄຸ້ມຄອງແຫຼ່ງທຶນ, ລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍການໄດ້ມາ ແລະ ຈຳໜ່າຍໄປ ຂອງຊັບສິນຂອງບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍບັນຊີທີ່ບໍ່ສະແດງຊື່ຜູ້ລົງທຶນລາຍຍ່ອຍ, ❹ຄົ້ນຄວ້າເນື້ອໃນເບື້ອງຕົ້ນຂອງຮ່າງຄຳແນະນຳວ່າດ້ວຍ ການເພີ່ມທະວີການເອົາໃຈໃສ່ລູກຄ້າ, ປັບປຸງບົດແນະນຳການບັນທຶກບັນຊີຊັບສິນບັດຄັງທີ່ ຂອງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ;

- ສືບຕໍ່ຕິດຕາມ ແລະ ກວດກາການສົ່ງລາຍງານຂໍ້ມູນກ່ຽວກັບສິນເຊື່ອທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ປີ 2015 ແລະ ຂໍ້ມູນສິນເຊື່ອ, ໜີ້ຕ້ອງຮັບທວງຍາກ ແລະ ພັນທະບັດທີ່ອະລະບົບທະນາຄານ ທີ່ຕິດພັນກັບລັດຖະບານ ເປັນປະຈຳແຕ່ລະເດືອນ;
- ສືບຕໍ່ສັງລວມ ແລະ ກວດກາການຮັກສາລະດັບຖານະເງິນຕາຕ່າງປະເທດຂອງບັນດາທະນາຄານທຸລະກິດຢ່າງເປັນປົກກະຕິ;
- ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດເງື່ອນໄຂເພີ່ມເຕີມ ຂອງທະນາຄານການຄ້າໄຊງ່ອນ-ຮ່າໂນ້ຍ ຈຳກັດ ສາຂາລາວ ເພື່ອກະກຽມຍົກລະດັບເປັນທະນາຄານທຸລະກິດເຕັມຮູບແບບ, ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດເງື່ອນໄຂເພີ່ມເຕີມຂອງທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) ສາຂາປາກເຊ ເພື່ອກຽມອອກໃບອະນຸຍາດສ້າງຕັ້ງຖາວອນ;
- ສືບຕໍ່ສັງລວມນິຕິກຳຂອງທະນາຄານແຫ່ງ ສປປ ລາວ ເພື່ອສົ່ງໃຫ້ກະຊວງຍຸຕິທຳ ລົງຈົດໝາຍເຫດທາງລັດຖະການ;
- ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດເງື່ອນໄຂເພີ່ມເຕີມຂອງທະນາຄານ ການຄ້າໄຊງ່ອນ-ຮ່າໂນ້ຍ ສາຂາລາວ ເພື່ອກະກຽມຍົກລະດັບເປັນທະນາຄານທຸລະກິດເຕັມຮູບແບບ, ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) ສາຂາປາກເຊ ເພື່ອກະກຽມອອກໃບອະນຸຍາດສ້າງຕັ້ງຖາວອນ;
- ປັບປຸງຮ່າງລະບຽບ ຄຄຊ ຈຳນວນ 4 ສະບັບ ຄື: ❶ຮ່າງລະບຽບວ່າດ້ວຍການຄຸ້ມຄອງຜູ້ລົງທຶນຕ່າງປະເທດ ທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບຢູ່ ສປປ ລາວ (ສະບັບປັບປຸງ), ❷ຮ່າງລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ (ໃໝ່), ❸ຮ່າງລະບຽບວ່າດ້ວຍການຮັບຮອງ ບໍລິສັດ ປະເມີນມູນຄ່າຊັບສິນ (ໃໝ່) ແລະ ❹ຮ່າງລະບຽບວ່າດ້ວຍການເປີດບັນຊີຕາງໜ້າຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢູ່ ສປປ ລາວ (ໃໝ່);
- ຕິດຕາມແຈ້ງຕອບຈາກກະຊວງການເງິນກ່ຽວກັບການໄຖ່ຖອນພັນທະບັດ ທີ່ຄົບກຳນົດ ຈຳນວນ 1.000 ຕື້ກີບ;
- ສືບຕໍ່ຄົ້ນຄວ້າຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ບໍລິໂພກທາງການເງິນ;
- ສືບຕໍ່ຄົ້ນຄວ້າລະບຽບວ່າດ້ວຍ Financial Service Provider ກ່ຽວກັບສະຖາບັນການເງິນ;
- ຕິດຕາມແຜນການຮ່ວມມືການເຊັນ MOU ລະຫວ່າງ ໂຮງພິມແຫ່ງຊາດຫວຽດນາມ ແລະ ໂຮງພິມທະນະບັດ ທຫລ;
- ສືບຕໍ່ປະຕິບັດໂຄງການເຊື່ອມໂຍງ Lao ATM Pool Switching (LAPS); ໂຄງການອອກບັດ CUP ຂອງອົງກອນ UPI ໂຄງການພັດທະນາລະບົບ Bconnex ກັບ BCEL ໄລຍະ 2;
- ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍໃໝ່ ຢ່າງໃກ້ຊິດ;
- ສືບຕໍ່ຮ່າງບົດວິເຄາະໜີ້ສິນຂອງບໍລິສັດ ພົນລະເຮືອນ ພັດທະນາກະສິກຳ-ປ່າໄມ້ ແລະ ຮ້ານພອນໄຊ ຂາຍເຄື່ອງກໍ່ສ້າງ;
- ປັບປຸງບົດລາຍງານການເຄື່ອນໄຫວວຽກງານ 3 ສ້າງ ແຕ່ປີ 2012-2015 ເພື່ອປະມວນຜົນທ້າຍປີ 2015, ປັບປຸງຂໍ້ຕົກລົງຄະນະຮັບຜິດຊອບວຽກງານ 3 ສ້າງ ຢູ່ຂົງເຂດທະນາຄານ ແລະ ສ້າງແຜນໃຫ້ຄະນະຊີ້ນຳລົງຮາກຖານເກັບກຳ, ຕິດຕາມ ແລະ ຊຸກຍູ້ວຽກງານ 3 ສ້າງ ຢູ່ຂົງເຂດທະນາຄານທົ່ວປະເທດ;

- ສືບຕໍ່ຄົ້ນຄວ້າການສະເໜີຂໍອອກຈຳໜ່າຍຮຸ້ນຄັ້ງທຳອິດ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຂອງບໍລິສັດ ສຸວັນນີໂຮມເຊັ້ນເຕີ ມະຫາຊົນ ແລະ ກະກຽມຫັນບໍລິສັດ ຊີມັງລາວ ຈຳກັດ ເປັນບໍລິສັດ ມະຫາຊົນ;
- ສືບຕໍ່ລາຍງານທຸລະກຳທີ່ມີລັກສະນະພາໃຫ້ສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ເພື່ອວິເຄາະ ແລະ ລາຍງານຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ດຣ. ສົມພາວ ໄຟສິດ

ຕາຕະລາງຄັດຕິດບົດລາຍງານ

ຕາຕະລາງ ທີ 1: ສະພາບອັດຕາແລກປ່ຽນພາຍໃນ

| ອັດຕາ | ເດືອນຜ່ານມາ 08/2015 | | | ເດືອນນີ້ 09/2015 | | | %(+)ເງິນກີບແຂງ/(-) ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| +ໃນລະບົບ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ໂດລາ | 8.161,58 | 8.192,50 | 8.179,50 | 8.153,69 | 8.181,59 | 8.164,36 | 0,10% | 0,13% | 0,18% |
| ບາດ | 237,65 | 238,60 | 238,18 | 232,40 | 233,43 | 233,16 | 2,26% | 2,21% | 2,15% |
| +ນອກລະບົບ | | | | | | | | | |
| ໂດລາ | 8.171,74 | 8.208,11 | 8.189,92 | 8.205,68 | 8.276,59 | 8.241,13 | -0,41% | -0,83% | -0,62% |
| ບາດ | 239,21 | 240,73 | 239,97 | 233,96 | 235,10- | 234,53 | 2,24% | 2,39% | 2,32% |
| ຜົດຕ່າງອັດຕາໃນລະບົບ ແລະນອກລະບົບ (%) | | | | | | | | | |
| -ໂດລາ | 0,12% | 0,19% | 0,13% | 0,64% | 1,16% | 0,94% | | | |
| -ບາດ | 0,66% | 0,90% | 0,75% | 0,67% | 0,72% | 0,59% | | | |

ຕາຕະລາງ ທີ 2: ສະພາບການຊື້-ຂາຍເງິນຕາຕ່າງປະເທດ

| | ເດືອນ 08/2015 | | ເດືອນ 09/2015 | | | (%) +ເພີ່ມຂຶ້ນ/-ຫລຸດລົງ | |
|---|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ທຽບເທົ່າໂດລາ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | | |
| - ທ/ຄ ທຸລະກິດລັດ | 85,87 | 1.325,81 | 127,89 | 1.521,42 | 170,49 | 46,93% | 14,75% |
| - ທ/ຄ ທຸລະກິດອື່ນໆ | 306,38 | 1.564,04 | 477,59 | 1.661,12 | 524,10 | 55,44% | 6,19% |
| **ລວມຊື້:** | **392,26** | **2.889,85** | **605,48** | **3.182,54** | **694,59** | **54,02%** | **10,12%** |
| 2. ການຂາຍເງິນຕາຕ່າງປະເທດ | | | | | | | |
| - ທ/ຄທຸລະກິດລັດ | 114,75 | 1.105,19 | 147,55 | 1.149,94 | 179,75 | 28,59% | 4,05% |
| - ທ/ຄທຸລະກິດອື່ນໆ | 109,83 | 11.734,21 | 428,51 | 14.225,37 | 826,81 | 288,15% | 21,22% |
| ລວມຂາຍ: | **224,57** | **12.839,39** | **576,07** | **15.375,32** | **1.006,56** | **155,86%** | **19,75%** |
| ທທກ ຊື້-ຂາຍສຸດທິ | **167,69** | **-9.949,54** | **29,42** | **-12.192,78** | **-311,97** | **-82,49%** | **22,54%** |
| % ຜົດຕ່າງຊື້-ຂາຍ | 42,75 | -344,29 | 4,86 | -383,11 | -44,91 | -378,95% | -388,53% |
| ມູນຄ່າການຊື້-ຂາຍ | **616,83** | **15.729,25** | **1.181,55** | **18.557,85** | **1.701,15** | **91,11%** | **17,98%** |
| 3. ຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | | | | | | | |
| - ທຫລ ຊື້ຈາກ ທທກ | 2,00 | 380,00 | 7,02 | 886,50 | 31,84 | 250,82% | 133,29% |
| - ທຫລ ຂາຍໃຫ້ ທທກ | 126,12 | 692,00 | 146,36 | 150,00 | 150,56 | 16,05% | -78,32% |
| ທຫລ ຊື້-ຂາຍສຸດທິ | **-124,12** | **-312,00** | **-139,35** | **736,50** | **-118,73** | **12,27%** | **-336,06%** |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **28,60** | **991,36** | **17,22** | **436,73** | **29,45** | **-39,78%** | **-55,95%** |
| 5. ຊື້-ຂາຍ ລະຫວ່າງ ທຫລ ກັບພາກສ່ວນອື່ນ (ກະຊວງການເງິນ ແລະ ຮ້ານແລກປ່ຽນເງິນຕາ) | | | | | | | |
| - ທຫລ ຊື້ຈາກພາກສ່ວນອື່ນ | 16,26 | 8.450,02 | 71,22 | 16.069,85 | 521,16 | 338,16% | 97,20% |
| - ທຫລ ຂາຍໃຫ້ພາກສ່ວນອື່ນ | 237,73 | 0,00 | 420,74 | 0,00 | 520,74 | 81,68% | 0,00% |
| ທຫລ ຊື້-ຂາຍສຸດທິ | **-221,48** | **8.450,02** | **-349,52** | **16.069,85** | **100,42** | **62,31%** | **97,20%** |